ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ອົງການກວດສອບແຫ່ງລັດ

ເລກທີ 462 /ອກສລ

ນະຄອນຫຼວງວຽງຈັນ, ວັນທີ 07 APR 2017

# ຂໍ້ຕົກລົງ
## ວ່າດ້ວຍການກຳນົດຂັ້ນນັກກວດສອບແຫ່ງລັດ

- ອີງຕາມ ກົດໝາຍວ່າດ້ວຍການກວດສອບແຫ່ງລັດ ສະບັບເລກທີ 09/ສພຊ, ລົງວັນທີ 11 ພະຈິກ 2016;
- ອີງຕາມ ກົດໝາຍ ວ່າດ້ວຍພະນັກງານ-ລັດຖະກອນ ສະບັບເລກທີ 74/ສພຊ, ລົງວັນທີ 18 ທັນວາ 2015;
- ອີງຕາມ ດຳລັດນາຍົກລັດຖະມົນຕີ ສະບັບເລກທີ 99/ນຍ, ລົງວັນທີ 23 ມິຖຸນາ 2008 ວ່າດ້ວຍ ຕຳແໜ່ງບໍລິຫານລັດຖະກອນແຫ່ງ ສປປ ລາວ;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການອະນຸມັດຂັ້ນນັກກວດສອບແຫ່ງລັດ ສະບັບເລກທີ 66/ອກສລ, ລົງວັນທີ 20 ມັງກອນ 2017;
- ອີງຕາມ ໜັງສືສະເໜີ ຂອງກົມຈັດຕັ້ງພະນັກງານ ສະບັບເລກທີ 404/ກຈຕ, ລົງວັນທີ 3 ເມສາ 2017.

### ໝວດທີ I
### ບົດບັນຍັດທົ່ວໄປ

**ມາດຕາ 1: ຈຸດປະສົງ.**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ, ນະໂຍບາຍ, ເງື່ອນໄຂ, ມາດຕະຖານ ແລະ ຂັ້ນຕອນການດຳເນີນວຽກງານກ່ຽວກັບການກຳນົດຂັ້ນນັກກວດສອບແຫ່ງລັດ ແນໃສ່ຮັບປະກັນການຈັດຕັ້ງປະຕິບັດ ໃຫ້ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ, ຊຸກຍູ້ສົ່ງເສີມການພັດທະນາ, ສ້າງຂີດຄວາມສາມາດໃຫ້ພະນັກງານ-ລັດຖະກອນ ໃຫ້ເປັນນັກກວດສອບແຫ່ງລັດ, ເພື່ອຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ ໃນແຕ່ລະໄລຍະຢ່າງມີປະສິດທິຜົນສູງ.

**ມາດຕາ 2: ນັກກວດສອບແຫ່ງລັດ.**

ນັກກວດສອບແຫ່ງລັດ ແມ່ນພະນັກງານ ສັງກັດຢູ່ອົງການກວດສອບແຫ່ງລັດ, ມີນາດຕະຖານ ແລະ ປະຕິບັດໜ້າທີ່ວຽກງານ ພາຍໃຕ້ການຄຸ້ມຄອງດ້ານວຽກງານວິຊາສະເພາະກວດສອບຕາມລະບົບການຈັດຕັ້ງຂັ້ນສູກກາງ ແລະ ທ້ອງຖິ່ນ ໂດຍໄດ້ກຳນົດຂັ້ນນັກກວດສອບແຫ່ງລັດ ເປັນ 4 ຂັ້ນ, ດັ່ງນີ້:

-ນັກກວດສອບແຫ່ງລັດ ຂັ້ນ 1;

-ນັກກວດສອບແຫ່ງລັດ ຂັ້ນ 2;

-ນັກກວດສອບແຫ່ງລັດ ຂັ້ນ 3;

-ນັກກວດສອບແຫ່ງລັດ ຂັ້ນ 4.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ ຂອງນັກກວດສອບແຫ່ງລັດ

**ມາດຕາ 3: ໜ້າທີ່ຂອງນັກກວດສອບແຫ່ງລັດ.**

ນັກກວດສອບແຫ່ງລັດມີໜ້າທີ່ ດັ່ງນີ້:

1. ສຳຫຼວດ, ເກັບກຳ ແລະ ລວບລວມຂໍ້ມູນ; ສ້າງແຜນການ, ແຜນງານ, ແຜນຄືນກຳນົດວິທີການກວດສອບ, ວິເຄາະ, ວິໄຈ ແລະ ຂັ້ນຕອນການກວດສອບ;

2. ດຳເນີນການກວດສອບ;

3. ສະຫຼຸບ, ສັງລວມ, ເກັບກຳຫຼັກຖານການກວດສອບ ແລະ ລາຍງານຜົນການກວດສອບ;

4. ຮັບຜິດຊອບຕໍ່ຄຳເຫັນ ແລະ ຄຳແນະນຳການກວດສອບ;

5. ປະຕິບັດໜ້າທີ່ອື່ນໆ ຕາມກົດໝາຍ, ລະບຽບການ ແລະ ການມອບໝາຍຈາກຂັ້ນເທິງ.

**ມາດຕາ 4: ສິດຂອງນັກກວດສອບແຫ່ງລັດ.**

ນັກກວດສອບແຫ່ງລັດ ມີສິດ ດັ່ງນີ້:

1. ເປັນເອກະລາດໃນການດຳເນີນການກວດສອບ;

2. ພົວພັນປະສານສົມທົບກັບເປົ້າໝາຍກວດສອບ;

3. ສະເໜີ, ເລັ່ງທວງ ແລະ ເຂົ້າເຖິງຂໍ້ມູນທີ່ກ່ຽວຂ້ອງກັບການກວດສອບ.

4. ສອບຖາມເພື່ອຄວາມກະຈ່າງແຈ້ງຈາກເປົ້າໝາຍກວດສອບ;

5. ສະແດງຄຳເຫັນ ແລະ ແນະນຳວິທີການປັບປຸງແກ້ໄຂໃນຕໍ່ໜ້າ;

6. ໄດ້ຮັບການບຳລຸງ ແລະ ຍົກລະດັບກ່ຽວກັບວຽກງານກວດສອບ;

7. ນັກກວດສອບແຫ່ງລັດ ມີສິດໄດ້ຮັບຕຳແໜ່ງບໍລິຫານໃດໜຶ່ງຕາມຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ວຽກງານ;

8. ໄດ້ຮັບສິດອື່ນໆ ຕາມກົດໝາຍທີ່ກຳນົດໄວ້.

## ໝວດທີ III
## ມາດຕະຖານຂອງນັກກວດສອບແຫ່ງລັດ

**ມາດຕາ 5: ມາດຕະຖານຂອງນັກກວດສອບແຫ່ງລັດ ຂັ້ນ 1.**

ນັກກວດສອບແຫ່ງລັດຂັ້ນ 1 ມີມາດຕະຖານ ແລະ ເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ມີຈັນຍາທຳດີ, ມີຄວາມສັດຊື່ບໍລິສຸດ ຕໍ່ການປະຕິບັດໜ້າທີ່ວຽກງານຂອງຕົນ.

2. ມີລະດັບວິຊາສະເພາະໃດໜຶ່ງທີ່ກ່ຽວຂ້ອງ ກັບວຽກງານການກວດສອບ ແຕ່ຂັ້ນສູງຂຶ້ນໄປ.

3. ກຳໄດ້, ເຂົ້າໃຈ ແລະ ຮູ້ນຳໃຊ້ ກົດໝາຍວ່າດ້ວຍການກວດສອບແຫ່ງລັດ, ມາດຕະຖານການກວດສອບແຫ່ງລັດ ແລະ ນິຕິກຳອື່ນໆ ຂອງວຽກງານກວດສອບແຫ່ງລັດ.

4. ຮູ້ສ້າງ, ລຽບລຽງ, ປັບປຸງ ແລະ ດັດແກ້ ເອກະສານທາງການ ແລະ ເອກະສານສະເໜີຂໍ້ມູນ ນຳເປົ້າໝາຍຖືກກວດສອບ.

5. ຮູ້ສ້າງແຜນກວດສອບ (Audit program) ຂອງນັກກວດສອບແຫ່ງລັດ, ຮູ້ສະຫຼຸບປະເດັນກວດສອບ ( Audit finding ), ຮູ້ສ້າງເອກະສານປະຕິບັດງານກວດສອບ ( Working Paper), ຮູ້ສ້າງບົດບັນທຶກປະຈຳວັນການກວດສອບ; ຮູ້ສ້າງ, ຈັດລຽງ ແລະ ເກັບມ້ຽນຫຼັກຖານກວດສອບ.

6. ເປັນພະນັກງານກວດສອບ ຢູ່ອົງການກວດສອບແຫ່ງລັດ 3 ປີຂຶ້ນໄປ;

7. ມີຄວາມຮູ້ທາງດ້ານພາສາຕ່າງປະເທດ ປະເພດ B ຂຶ້ນໄປ ແລະ ສາມາດນຳໃຊ້ຄອມພິວເຕີໄດ້ດີ;

8. ມີສຸຂະພາບແຂງແຮງດີ.

9. ໄດ້ຜ່ານການຝຶກອົບຮົມທາງດ້ານທິດສະດີ ແລະ ພາກປະຕິບັດຕາມຫຼັກສູດນັກກວດສອບແຫ່ງລັດຂັ້ນ 1 ຂອງສະຖາບັນຝຶກອົບຮົມອົງການກວດສອບແຫ່ງລັດ (ຫຼັກສູດຝຶກອົບຮົມໄດ້ກຳນົດໄວ້ສະເພາະ).

**ມາດຕາ 6: ມາດຕະຖານນັກກວດສອບແຫ່ງລັດ ຂັ້ນ 2.**

ນັກກວດສອບແຫ່ງລັດ ຂັ້ນ 2, ນອກຈາກມີມາດຕະຖານ ຕາມມາດຕະຖານ ຂອງນັກກວດສອບຂັ້ນ 1 ຕ້ອງມີມາດຕະຖານ ແລະ ເງື່ອນໄຂຄົບຖ້ວນ ເພີ່ມເຕີມ ດັ່ງນີ້:

1. ກຳໄດ້ ແລະ ຮູ້ນຳໃຊ້ ແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງລັດ ໃນແຕ່ລະໄລຍະ ເຂົ້າໃນການເຄື່ອນໄຫວວຽກງານວິຊາສະເພາະ ທີ່ຕົນຮັບຜິດຊອບ.

2. ກຳໄດ້ ແລະ ເຂົ້າໃຈ ຢ່າງເລິກເຊິ່ງ ລະບົບການຄວບຄຸມພາຍໃນ ຂອງເປົ້າໝາຍຖືກກວດສອບ ທີ່ຕົນຮັບຜິດຊອບກວດສອບ.

3. ສາມາດເປັນຮອງຫົວໜ້າຄະນະກວດສອບແຫ່ງລັດ.

4. ສາມາດຊີ້ນຳ ການສ້າງ, ລຽບລຽງ, ປັບປຸງ ແລະ ດັດແກ້ ເອກະສານທາງການ ແລະ ເອກະສານ ສະເໜີຂໍ້ມູນ ນຳເປົ້າໝາຍຖືກກວດສອບ.

5. ສາມາດຊີ້ນຳ ການສ້າງແຜນກວດສອບ (Audit program) ຂອງນັກກວດສອບແຫ່ງລັດ, ສະຫຼຸບປະເດັນກວດສອບ ( Audit finding ), ສ້າງເອກະສານປະຕິບັດງານ ( Working Paper), ສ້າງບົດບັນທຶກປະຈຳວັນການກວດສອບ; ສ້າງ, ຈັດລຽງ ແລະ ເກັບມ້ຽນຫຼັກຖານກວດສອບ.

6. ມີຄວາມສາມາດໃນການສ້າງແຜນກວດສອບລວມ ຂອງຄະນະກວດສອບ, ຮູ້ສ້າງເອກະສານລະບົບການຄວບຄຸມພາຍໃນເປົ້າໝາຍຖືກກວດສອບ, ຮູ້ວິເຄາະ, ຈຳແນກ ແລະ ຕີລາຄາກຳນົດຄວາມສ່ຽງ ໃນລະດັບພື້ນຖານ.

7. ຕ້ອງເປັນນັກກວດສອບແຫ່ງລັດ ຂັ້ນ 1 ນັບຕັ້ງແຕ່ 3 ປີຂຶ້ນໄປ;

8. ໄດ້ຜ່ານການຝຶກອົບຮົມທາງດ້ານທິດສະດີ ແລະ ພາກປະຕິບັດຕາມຫຼັກສູດນັກກວດສອບຂັ້ນ 2 ຂອງສະຖາບັນຝຶກອົບຮົມອົງການກວດສອບແຫ່ງລັດ (ຫຼັກສູດຝຶກອົບຮົມໄດ້ກຳນົດໄວ້ສະເພາະ);

ມາດຕາ 7: ມາດຕະຖານນັກກວດສອບແຫ່ງລັດຂັ້ນ 3.

ນັກກວດສອບແຫ່ງລັດ ຂັ້ນ 3, ນອກຈາກມີມາດຕະຖານ ຕາມມາດຕະຖານ ຂອງນັກກວດສອບຂັ້ນ 2 ແລ້ວ ຕ້ອງມີມາດຕະຖານ ແລະ ເງື່ອນໄຂຄົບຖ້ວນ ເພີ່ມເຕີມ ດັ່ງນີ້:

1. ກຳແໜ້ນ ແລະ ມີຄວາມສຳນານ ໃນການໝູນໃຊ້ ລະບຽບກົດໝາຍ ທີ່ພົວພັນ ເຂົ້າໃນການກວດສອບ, ສາມາດຕີຄວາມໝາຍ ແລະ ນຳໃຊ້ບົດບັນຍັດຂອງກົດໝາຍ ເຂົ້າໃນການກວດສອບຕົວຈິງ.

2. ກຳໄດ້ ແລະ ເຂົ້າໃຈ ນິຕິກຳ ແລະ ມາດຕະຖານການກວດສອບ ຂອງສາກົນ ທີ່ອົງການກວດສອບແຫ່ງລັດ ສປປ ລາວ ເປັນສະມາຊິກ ແລະ ມີສາຍພົວພັນຮ່ວມມື.

3. ສາມາດເປັນຫົວໜ້າຄະນະກວດສອບແຫ່ງລັດ.

4. ມີຄວາມສາມາດສ້າງແຜນກວດສອບ ຂອງກົມ, ສ້າງຂັ້ນຕອນເດີນເອກະສານ ຂອງເປົ້າໝາຍ (Flow Chart ); ຮູ້ວິເຄາະ ແລະ ກຳນົດຄວາມສ່ຽງ ຢ່າງສຳນິສຳນານ.

5. ສາມາດສ້າງບົດບັນທຶກຜົນການກວດສອບ, ບົດແຈ້ງຜົນກວດສອບ, ບົດສະຫຼຸບວຽກງານວິຊາສະເພາະ, ບົດກ່າວຄຳເຫັນດ້ານວິຊາສະເພາະ.

6. ສາມາດ ສ້າງບົດລາຍງານ ຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ.

7. ສາມາດຊີ້ນຳ ການສ້າງແຜນກວດສອບລວມ ຂອງຄະນະກວດສອບ, ການສ້າງເອກະສານລະບົບການຄວບຄຸມພາຍໃນເປົ້າໝາຍຖືກກວດສອບ, ການວິເຄາະ, ຈຳແນກ ແລະ ຕີລາຄາກຳນົດຄວາມສ່ຽງ.

8. ໄດ້ຜ່ານການຍົກລະດັບທິດສະດີການເມືອງ ລະບົບ 45 ວັນ ຂຶ້ນໄປ.

9. ຕ້ອງເປັນນັກກວດສອບແຫ່ງລັດ ຂັ້ນ 2 ຢ່າງໜ້ອຍ 3 ປີຂຶ້ນໄປ;

10. ໄດ້ຜ່ານການຝຶກອົບຮົມທາງດ້ານທິດສະດີ ແລະ ພາກປະຕິບັດຕາມຫຼັກສູດນັກກວດສອບ ຂັ້ນ 3 ຂອງສະຖາບັນຝຶກອົບຮົມອົງການກວດສອບແຫ່ງລັດ (ຫຼັກສູດຝຶກອົບຮົມໄດ້ກໍານົດໄວ້ສະເພາະ);

**ມາດຕາ 8: ມາດຕະຖານນັກກວດສອບແຫ່ງລັດຂັ້ນ 4:**

ນັກກວດສອບແຫ່ງລັດ ຂັ້ນ 4, ນອກຈາກມີມາດຕະຖານ ຕາມມາດຕະຖານ ຂອງນັກກວດສອບຂັ້ນ 3 ແລ້ວ ຕ້ອງມີມາດຕະຖານ ແລະ ເງື່ອນໄຂຄົບຖ້ວນ ເພີ່ມເຕີມ ດັ່ງນີ້:

1. ມີຄວາມຮູ້, ຄວາມສາມາດ ໃນການສ້າງແຜນຍຸດທະສາດກວດສອບແຫ່ງລັດ ໄລຍະຍາວ, ໄລຍະກາງ ແລະ ໄລຍະສັ້ນ.

2. ສາມາດເປັນຜູ້ຊີ້ນໍາຄະນະກວດສອບແຫ່ງລັດ.

3. ສາມາດ ຊີ້ນໍາ ການສ້າງບົດບັນທຶກຜົນການກວດສອບ, ການສ້າງບົດແຈ້ງຜົນກວດສອບ, ບົດສະຫຼຸບວຽກງານວິຊາສະເພາະ, ບົດກ່າວຄໍາເຫັນ ດ້ານວິຊາສະເພາະ.

4. ສາມາດ ຊີ້ນໍາ ການສ້າງບົດລາຍງານ ຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ.

5. ໄດ້ຜ່ານການຍົກລະດັບທິດສະດີການເມືອງ ລະບົບ ບໍາລຸງຂັ້ນສູງຂຶ້ນໄປ.

6. ຕ້ອງເປັນນັກກວດສອບ ຂັ້ນ 3 ເປັນເວລາ 5 ປີຂຶ້ນໄປ.

## ໝວດທີ IV
## ການຄັດເລືອກ, ເລື່ອນຂັ້ນ ແລະ ຫຼຸບຂັ້ນ

**ມາດຕາ 9: ການຄັດເລືອກ.**

ການຄັດເລືອກແມ່ນ ການເລືອກເຟັ້ນພະນັກງານວິຊາການກວດສອບແຫ່ງລັດ, ທີ່ມີມາດຕະຖານ ແລະ ເງື່ອນໄຂຄົບຖ້ວນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 5 (ຂໍ້ 1 ຫາ 7) ຂອງຂໍ້ຕົກລົງສະບັບນີ້ ເພື່ອນໍາສະເໜີ ປະທານອົງການກວດສອບແຫ່ງລັດ ອະນຸມັດໃຫ້ເຂົ້າຝຶກອົບຮົມຫຼັກສູດນັກກວດສອບແຫ່ງລັດຂັ້ນ 1.

**ມາດຕາ 10: ການເລື່ອນຂັ້ນ.**

ການເລື່ອນຂັ້ນນັກກວດສອບແຫ່ງລັດຈາກຂັ້ນໜຶ່ງ ຫາ ຂັ້ນທີ່ສູງກວ່າ ຕ້ອງໄດ້ມີມາດຕະຖານຄົບຖ້ວນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 5, 6, 7 ແລະ 8, ຊຶ່ງຕ້ອງໄດ້ຜ່ານການສອບເສັງຕາມຂັ້ນຕອນດັ່ງນີ້:

1. ສະຖາບັນຝຶກອົບຮົມກວດສອບ ສ້າງແຜນສອບເສັງ ເລື່ອນຂັ້ນນັກກວດສອບ ຕາມຫຼັກສູດ ທີ່ໄດ້ຮັບການອະນຸມັດ.

2. ນັກກວດສອບ ຂຽນຄຳຮ້ອງ ເພື່ອສະໝັກສອບເສັງ ດ້ວຍຕົນເອງ.

3. ນັກກວດສອບ ມີສິດສະໝັກສອບເສັງໃນຂັ້ນໜຶ່ງ ບໍ່ໃຫ້ເກີນ 3 ຄັ້ງ, ກໍລະນີ ສອບເສັງບໍ່ຜ່ານ ຈະບໍ່ໄດ້ຮັບອະນຸຍາດ ໃຫ້ສອບເສັງອີກ.

4. ນັກກວດສອບ ທີ່ມີຕຳແໜ່ງບໍລິຫານແລ້ວ ສາມາດສອບເສັງເອົາຂັ້ນນັກກວດສອບ ທີ່ສູງກວ່າ, ໃນກໍລະນີ ສາມາດສອບເສັງຜ່ານ ແມ່ນໄດ້ຮັບນະໂຍບາຍຄິດໄລ່ອຸດໜູນ ສູງກວ່າຕຳແໜ່ງເບື້ອງລັດ ຕາມຂັ້ນນັກກວດສອບ ທີ່ສອບເສັງໄດ້.

**ມາດຕາ 11: ການທຽບຂັ້ນນັກກວດສອບ.**

ຂັ້ນນັກກວດສອບແຫ່ງລັດ ແມ່ນຕຳແໜ່ງວິຊາການ ໄດ້ຮັບນະໂຍບາຍອຸດໜູນທຽບເທົ່າເງິນນະໂຍບາຍອຸດໜູນຕຳແໜ່ງບໍລິຫານ; ດັ່ງນີ້:

1. ນັກກວດສອບຂັ້ນ 1 ໄດ້ຮັບນະໂຍບາຍອຸດໜູນທຽບເທົ່າ ເງິນນະໂຍບາຍອຸດໜູນຕຳແໜ່ງບໍລິຫານປະເພດ 5.
2. ນັກກວດສອບຂັ້ນ 2 ໄດ້ຮັບນະໂຍບາຍອຸດໜູນທຽບເທົ່າ ເງິນນະໂຍບາຍອຸດໜູນຕຳແໜ່ງບໍລິຫານປະເພດ 4.
3. ນັກກວດສອບຂັ້ນ 3 ໄດ້ຮັບນະໂຍບາຍອຸດໜູນທຽບເທົ່າ ເງິນນະໂຍບາຍອຸດໜູນຕຳແໜ່ງບໍລິຫານປະເພດ 3.
4. ນັກກວດສອບຂັ້ນ 4 ໄດ້ຮັບນະໂຍບາຍອຸດໜູນທຽບເທົ່າ ເງິນນະໂຍບາຍອຸດໜູນຕຳແໜ່ງບໍລິຫານປະເພດ 2.

## ໝວດທີ V

## ຂໍ້ຫ້າມນັກກວດສອບແຫ່ງລັດ

**ມາດຕາ 12: ຂໍ້ຫ້າມນັກກວດສອບແຫ່ງລັດ.**

1. ສວຍໃຊ້ຕຳແໜ່ງ, ໜ້າທີ່, ສິດອຳນາດ ເພື່ອຜົນປະໂຫຍດສ່ວນຕົວ, ຄອບຄົວ ຫຼື ຍາດພີ່ນ້ອງ;
2. ນຳໃຊ້ສິດ, ປະຕິບັດໜ້າທີ່ເກີນຂອບເຂດ ຕາມທີ່ກົດໝາຍໄດ້ກຳນົດໄວ້;
3. ບັງຄັບ ແລະ ນາບຂູ່ຜູ້ຖືກກວດສອບ;
4. ເມີນເສີຍຕໍ່ໜ້າທີ່, ບິດເບືອນຄວາມຈິງ, ປິດບັງຂໍ້ມູນຫຼັກຖານ;
5. ກົດໜ່ວງເອກະສານ ເພື່ອຫາຜົນປະໂຫຍດຈາກການປະຕິບັດວຽກງານ;
6. ທວງ, ຮຽກ, ຮັບເອົາສິນບົນຈາກເປົ້າໝາຍທີ່ຖືກກວດສອບ ຫຼື ການຈັດຕັ້ງ;
7. ເປັນທີ່ປຶກສາ ແລະ ພົວພັນກັບເປົ້າໝາຍຖືກກວດສອບ ເພື່ອຫາຜົນປະໂຫຍດ;
8. ປິດບັງ, ຊຸກເຊື່ອງເອກະສານ, ຫຼັກຖານ ທີ່ມີຢູ່ໃນເອກະສານລາຍງານການເງິນ;
9. ເປີດເຜີຍຄວາມລັບທາງລັດຖະການ;

10. ມີພຶດຕິກຳອື່ນໆ ທີ່ຜິດຕໍ່ລະບຽບກົດໝາຍ.

## ໝວດທີ VI
## ການປົກປ້ອງ, ການປະຕິບັດນະໂຍບາຍ, ຍ້ອງຍໍ, ວິໄນ ແລະ ການສິ້ນສຸດ ເປັນນັກກວດສອບແຫ່ງລັດ

**ມາດຕາ 13: ການປົກປ້ອງ.**

ນັກກວດສອບແຫ່ງລັດ ມີສິດໄດ້ຮັບການປົກປ້ອງ ຕາມລະບຽບກົດໝາຍ ຈາກການບັງຄັບ, ນາບຂູ່ ແລະ ການກະທຳທີ່ແຕະຕ້ອງ ກຽດສັກສີ, ຊັບສິນ, ຊີວິດ ແລະ ສຸຂະພາບ.

**ມາດຕາ 14: ນະໂຍບາຍ.**

ນັກກວດສອບແຫ່ງລັດ ມີສິດໄດ້ຮັບນະໂຍບາຍ ດັ່ງນີ້:

1. ໄດ້ຮັບນະໂຍບາຍ ຕາມລະບຽບການ ຂອງລັດຖະກອນແຫ່ງ ສປປ ລາວ;
2. ໄດ້ຮັບນະໂຍບາຍ ອຸດໜູນຂັ້ນນັກກວດສອບ ຕາມຂັ້ນທີ່ສອບເສັງໄດ້;
3. ນັກກວດສອບ ທີ່ມີຕຳແໜ່ງບໍລິຫານແລ້ວ ສາມາດສອບເສັງຜ່ານຂັ້ນນັກກວດສອບ, ຄິດໄລ່ອຸດໜູນຕຳແໜ່ງບໍລິຫານວິຊາການ ແມ່ນໃຫ້ຄິດໄລ່ເອົາຕຳແໜ່ງເບື້ອງໄດ້ສູງກວ່າ.
4. ນັກກວດສອບແຫ່ງລັດ ລວມທັງ: ຄະນະປະທານອົງການກວດສອບແຫ່ງລັດ ແລະ ອົງການກວດສອບປະຈຳພາກ, ຄະນະນຳແຕ່ລະຂັ້ນ ແລະ ວິຊາການ ມີສິດໄດ້ຮັບນະໂຍບາຍ ຈາກຜົນສຳເລັດ ໃນການເຄື່ອນໄຫວປະຕິບັດໜ້າທີ່ວຽກງານ.
5. ນັກກວດສອບແຫ່ງລັດ ແຕ່ລະຂັ້ນ ມີສິດໄດ້ຮັບການຄົ້ນຄ້ວາ ເລື່ອນຂັ້ນຕຳແໜ່ງບໍລິຫານ ຕາມກົດໝາຍວ່າດ້ວຍພະນັກງານ-ລັດຖະກອນແຫ່ງ ສປປລາວ.

**ມາດຕາ 15: ການຍ້ອງຍໍ.**

ນັກກວດສອບແຫ່ງລັດ ຜູ້ທີ່ມີຜົນງານດີເດັ່ນໃນການປະຕິບັດໜ້າທີ່ວຽກງານ ນອກຈາກຈະໄດ້ຮັບນະໂຍບາຍຕາມມາດຕາ 14 ຂອງຂໍ້ຕົກລົງສະບັບນີ້, ຍັງໄດ້ຮັບການຍ້ອງຍໍຕາມດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍ ການເພີ່ມທະວີວຽກງານແຂ່ງຂັນ-ຍ້ອງຍໍໃນໄລຍະໃໝ່ ສະບັບເລກທີ 121/ນຍ, ລົງວັນທີ 24 ກຸມພາ 2010.

**ມາດຕາ 16: ການປະຕິບັດວິໄນ.**

ນັກກວດສອບແຫ່ງລັດ ທີ່ລະເມີດຂໍ້ຫ້າມຕາມຂໍ້ຕົກລົງສະບັບນີ້ ຫຼື ຂໍ້ຫ້າມຂອງກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ຫຼື ລະເມີດກົດໝາຍ ແມ່ນຈະຖືກປະຕິບັດວິໄນທາງບໍລິຫານ ຕາມແຕ່ລະກໍລະນີ ຫຼື ຖືກລົງໂທດຕາມກົດໝາຍ.

**ມາດຕາ 17: ການສິ້ນສຸດ.**

ການສິ້ນສຸດການເປັນນັກກວດສອບແຫ່ງລັດ ໃນກໍລະນີດັ່ງນີ້:

1. ເສຍຊີວິດ;
2. ຖືກປົດຂັ້ນນັກກວດສອບແຫ່ງລັດ;
3. ຖືກໄລ່ອອກຍ້ອນມີຄວາມຜິດທາງວິໄນ;
4. ມີຄຳຕັດສິນ ຫຼື ຄຳພິພາກສາຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ທີ່ຖືກລົງໂທດ, ຕັດອິດສະຫຼະພາບ ໃນກໍລະນີມີຄວາມຜິດໂດຍເຈດຕະນາ.

## ໝວດທີ VII
## ບົດບັນຍັດສຸດທ້າຍ

**ມາດຕາ 18: ການຈັດຕັ້ງປະຕິບັດ.**

ຫ້ອງການ, ອົງການກວດສອບປະຈຳພາກ, ບັນດາກົມ ແລະ ສະຖາບັນຝຶກອົບຮົມ, ພ້ອມການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ເປັນເອກະພາບ ແລະ ຖືກຕ້ອງ.

**ມາດຕາ 19: ຜົນສັກສິດ.**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ປະທານອົງການກວດສອບແຫ່ງລັດ

ປອ ນ. ວຽງທອງ ສີພັນດອນ